

# “ຊຸດຈີນແບບໃໝ່” ພັດທະນາເຄື່ອງນຸ່ງຂອງຖື ແລະ ໄດ້ຂະຫຍາຍໄປສູ່ຂົງເຂດອື່ນໆ

ເຄື່ອງນຸ່ງແບບສະບາຍໄດ້ເພີ່ມຮູບແສ່ວມັງກອນ ແລະ ນົກຫົງ, ເສື້ອແບບຈີນບູຮານບວກກັບໂສ້ງຄາວບອຍ, ເສື້ອຖັກແສ່ວບວກກັບກະໂປ່ງໜ້າມ້ຽນຂອງຈີນ. ປີ 2024, “ຊຸດຈີນແບບໃໝ່” ໄດ້ກາຍເປັນແຟຊັນໃໝ່ໃນສື່ສັງຄົມອອນລາຍຂອງຈີນ.

ການອອກແບບເຄື່ອງນຸ່ງຖື ເອົາປັດໄຈແບບຈີນປະສົມກັບ ຄວາມແຟຊັນຍຸກປັດຈຸບັນໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້ານັບມື້ນັບຫຼາຍຂຶ້ນ. ຕົວເລກຂໍ້ມູນສະແດງໃຫ້ເຫັນວ່າ: ປີ 2023, ຂະໜາດຕະຫຼາດເຄື່ອງນຸ່ງ “ຊຸດຈີນແບບໃໝ່” ມີເຖິງ 1 ຕື້ຢວນ.

## “ຊຸດຈີນແບບໃໝ່” ແມ່ນຫຍັງ?

ອັນທີ່ເອີ້ນວ່າ “ຊຸດຈີນແບບໃໝ່”, ທີ່ຈິງແລ້ວບໍ່ມີຄວາມໝາຍຈະແຈ້ງ. ໃນສາຍຕາຂອງລູກຄ້າຊາວໜຸ່ມຍຸກໃໝ່, ເຄື່ອງນຸ່ງທີ່ຖືເອົາປັດໄຈທີ່ມີມູນເຊື້ອແບບຈີນປະສົມເຂົ້າກັບຄວາມແຟຊັນຍຸກປັດຈຸບັນ, ລ້ວນແຕ່ຖືກເອີ້ນວ່າ: “ຊຸດຈີນແບບໃໝ່”. ມັນບໍ່ໄດ້ຫຼູຫຼາປານໃດ, ແຕ່ໄດ້ເນັ້ນໃສ່ຄວາມລຽບງ່າຍ ແລະ ຄວາມຕ້ອງການໃນຊີວິດປະຈຳວັນ.

“ເປັນຫຍັງຈຶ່ງເອີ້ນວ່າ ເປັນຊຸດຈີນແບບໃໝ່, ເລື່ອງ “ໃໝ່” ນີ້ຕົ້ນຕໍແມ່ນຍ້ອນວ່າ, ໄດ້ເພີ່ມການອອກແບບ ທີ່ທັນສະໄໝ ບົນພື້ນຖານປັດໄຈທີ່ມີມູນເຊື້ອແບບຈີນ.” ທ່ານ ເຫີຜິງ ທີ່ໄດ້ດຳເນີນວຽກງານການອອກແບບໃຫ້ຍີ່ຫໍ້ເຄື່ອງນຸ່ງທີ່ມີຊື່ສຽງເວົ້າວ່າ: “ເມື່ອສັງເກດຈາກປັດໄຈການອອກແບບແລ້ວເຫັນວ່າ, ຈະເພີ່ມປັດໄຈມູນເຊື້ອຂອງຈີນຕ່າງໆ ເຊັ່ນ: ກະດຸມແບບຈີນ ແລະ ຜ້າຄຸມແບບຈີນເປັນຕົ້ນ; ເມື່ອສັງເກດຈາກສະຕາຍແລ້ວເຫັນວ່າ, ສາມາດປະສົມກັບສະຕາຍຊຸດກີເຜົາຂອງຈີນ; ເມື່ອສັງເກດຈາກແຜນແພແລ້ວເຫັນວ່າ, ຈະເພີ່ມການອອກແບບທີ່ມີສີສັນທັນສະໄໝເຂົ້າໃນການຖັກແສ່ວ ຕາມແຜນແພ, ໃນທີ່ສຸດ, ຈະຜະລິດແບບມີສະຕາຍ ທັງພິຖີພິຖັນ ທັງສອດຄ່ອງກັບສາຍຕາຂອງຄົນຍຸກປັດຈຸບັນ.”

## “ຊຸດຈີນແບບໃໝ່” ບໍ່ເປັນພຽງເຄື່ອງນຸ່ງເທົ່ານັ້ນ

ຄຽງຄູ່ກັບ “ຊຸດຈີນແບບໃໝ່” ແລະ “ຄວາມແຟຊັນຈີນ” ໄດ້ພັດທະນາຂຶ້ນມາ, ສີມືດັ້ງເດີມຫຼາຍຢ່າງໄດ້ຖືກນຳໃຊ້ເຂົ້າໃນການຜະລິດຫີບ ແລະ ເຄື່ອງເອ້ຕ່າງໆ, ເຄື່ອງຫັດຖະກຳຕ່າງໆ ໄດ້ປະກົດມີຊີວິດຊີວາໃໝ່ ພາຍໃຕ້ການປະສົມປະສານຂອງສີມືດັ້ງເດີມ ແລະ ສີມືຍຸກປັດຈຸບັນ.

ໃນຂະແໜງການແຜ່ນແພດັ້ງເດີມ, ເຄື່ອງນຸ່ງຈີນແບບໃໝ່ໄດ້ຊຸກຍູ້ການພັດທະນາທຸກຂັ້ນຕອນໃນການຜະລິດເສື້ອຜ້າອາພອນ, ເມືອງສາວ ແຂວງຊານຕຸງ ແລະ ບ້ານສູຊຸນ ແຂວງເຈີ້ຈຽງ ມີຊື່ສຽງນັບມື້ນັບໂດ່ງດັງຂຶ້ນ ຍ້ອນເລື່ອງນີ້; ໃນຂະແໜງການທ່ອງທ່ຽວວັດທະນະທຳ, ການທ່ອງທ່ຽວ “ຊຸດຈີນແບບໃໝ່” ກໍໄດ້ຊຸກຍູ້ໃຫ້ມີການທ່ອງທ່ຽວແບບໃໝ່ ເຊັ່ນ: ໄປທ່ຽວຊົມຖະໜົນເກົ່າໃນເມືອງເກົ່າ, ເຂົ້າພັກໃນໂຮງແຮມແບບບູຮານ, ໄປທ່ຽວຊົມດອກໄມ້ໃນລະດູບານໃໝ່ ແລະ ໄປກິນນ້ຳຊາຢູ່ຕາມພູປູກຕົ້ນຊາ ເຊິ່ງໄດ້ດຶງດູດນັກທ່ອງທ່ຽວຊາວໜຸ່ມເປັນຈຳນວນຫຼວງຫຼາຍ.

ບໍ່ພຽງແຕ່ເປັນເຄື່ອງນຸ່ງເທົ່ານັ້ນ, ໃນຊຸມປີຜ່ານມາ, ໃນການປະດັບເຮືອນ, ຮ້ານຊານົມ, ເຄື່ອງສຳອາງ, ເຄື່ອງແຟຊັນ ແລະ ຂົງເຂດອື່ນໆ, ກໍໄດ້ເພີ່ມສີສັນ “ຊຸດຈີນແບບໃໝ່” ເຂົ້າໄປເລື້ອຍໆ.

ເຈົ້າໜ້າທີ່ຂອງໂຮງງານຜະລິດເຄື່ອງເຟີນິເຈີແຫ່ງໜຶ່ງຂອງເມືອງສີຕຸ່ງ ແຂວງຈຽງຊູ ກ່າວວ່າ: ແຕ່ກ່ອນ, ການຜະລິດເຄື່ອງເຟີນິເຈີຂອງຕົນ ສ່ວນຫຼາຍຈະເປັນເຄື່ອງເຟີນິເຈີແບບທັນສະໄໝ. ນັບແຕ່ປີກາຍເປັນຕົ້ນມາ, ການຈຳໜ່າຍເຄື່ອງເຟີນິເຈີ “ຊຸດຈີນແບບໃໝ່” ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ພວກເຂົາເຈົ້າກໍເລີ່ມເພີ່ມການຜະລິດຜະລິດຕະພັນ “ຊຸດຈີນແບບໃໝ່”.

## ເປັນຫຍັງ “ຊຸດຈີນແບບໃໝ່” ຈຶ່ງໄດ້ຮັບຄວາມນິຍົມຊົມຊອບຈາກຄົນທັງຫຼາຍ?

“ຊຸດຈີນແບບໃໝ່” ໄດ້ຮັບຄວາມນິຍົມຊົມຊອບຈາກຄົນທັງຫຼາຍ ແມ່ນຍ້ອນວ່າໄດ້ສືບທອດວັດທະນະທຳຈີນ ທີ່ໄດ້ສະສົມມາເປັນເວລາພັນປີ, ໄດ້ສືບທອດສີສີດັ້ງເດີມຂອງຈີນ ແລະ ຊາວໜຸ່ມຍຸກປັດຈຸບັນມີຄວາມໝັ້ນໃຈຕົນເອງຫຼາຍກວ່າເກົ່າ.

ເຄື່ອງນຸ່ງຕ່າງໆ ທີ່ໄດ້ເພີ່ມປັດໄຈອໍາມະຕະຂອງຈີນຕ່າງໆ ເຊັ່ນ: ຮູບຖັກແສ່ວ, ກະດຸມແບບດັ້ງເດີມ ແລະ ຮູບແຕ້ມນ້ຳໝຶກເປັນຕົ້ນ, ເຄື່ອງຫັດຖະກຳທີ່ໄດ້ນຳໃຊ້ສີມືດັ້ງເດີມຕ່າງໆ ແລະ ເຄື່ອງປະດັບເຮືອນທີ່ “ເປັນແບບທຳມະຊາດ” ເຫຼົ່ານີ້ ໄດ້ສ່ອງແສງໃຫ້ເຫັນວ່າ, ຊາວຈີນຍຸກປັດຈຸບັນ ມີການຍອມຮັບ ແລະ ມີຄວາມຮູ້ສຶກພາກພູມໃຈຕໍ່ວັດທະນະທຳດັ້ງເດີມຂອງຈີນ.

ເມື່ອພວກເຮົາ ໄດ້ຊົມ ໄດ້ເຫັນ ຜະລິດຕະພັນປະດິດສ້າງໃໝ່ ດ້ານວັດທະນະທຳທີ່ມີຄວາມພິຖີພິຖັນ, ຊົມງານວັດທະນະທຳດັ້ງເດີມທີ່ມີສີສັນພິເສດຕ່າງໆ, “ຊຸດຈີນແບບໃໝ່” ໄດ້ເພີ່ມພະລັງຊີວິດໃໝ່ໃຫ້ແກ່ວັດທະນະທຳດັ້ງເດີມ, ຄົນທັງຫຼາຍຈະສາມາດສຳຜັດກັບປະຫວັດສາດ, ສຳຜັດກັບວັດທະນະທຳດັ້ງເດີມ ແລະ ສຳຜັດກັບຄວາມແຟຊັນຈາກຜະລິດຕະພັນ ຫຼື ວັດທະນະທຳເຫຼົ່ານີ້.

ແຫຼ່ງຂ່າວ: ສຳນັກຂ່າວສານຈີນ, ໜັງສືພິມການຄ້າຈີນ ແລະ ອື່ນໆ; ພາບໂດຍ: ສຳນັກຂ່າວຊິນຮວາ







# ເລີ່ມງານປະກວດການອອກແບບດ້ານສິລະປະສາກົນ ພາຍໃຕ້ຂອບການຮ່ວມມືແມ່ນ້ຳລ້ານຊ້າງ - ແມ່ນ້ຳຂອງ

ງານປະກວດການອອກແບບດ້ານສິລະປະສາກົນ ພາຍໃຕ້ຂອບການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ 2024 ພາຍໃຕ້ຫົວຂໍ້ “ກຳລັງຂັບເຄື່ອນໃໝ່ສີຂຽວ ແລະ ອະນາຄົດໃໝ່ຂອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ” ໄດ້ເລີ່ມຂຶ້ນຢ່າງເປັນທາງການ ຢູ່ນະຄອນຫຼວງປັກກິ່ງ ສປ ຈີນ ໃນຫວ່າງມໍ່ໆມານີ້ ໂດຍໄດ້ເຊີນຊວນນາຍຊ່າງອອກແບບຕ່າງໆ ອອກແບບຜົນງານສິລະປະກ່ຽວກັບເນື້ອໃນຕ່າງໆ ເຊັ່ນ: ການຮ່ວມມືກ່ຽວກັບຄວາມໝັ້ນຄົງ ດ້ານພະລັງງານລະຫວ່າງບັນດາປະເທດ ຕາມລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ການຮ່ວມກັນສ້າງໂຄງການພື້ນຖານໂຄງລ່າງດ້ານພະລັງງານ ແລະ ອື່ນໆ.

ຝ່າຍເຈົ້າພາບຈະຮັບເອົາຜົນງານການອອກແບບຈົນເຖິງເດືອນພະຈິກປີນີ້, ຈະກວມທັງຜົນງານການອອກແບບໃນດ້ານຕ່າງໆ ເຊັ່ນ: ການຮ່ວມມືກ່ຽວກັບຄວາມໝັ້ນຄົງດ້ານພະລັງງານ ລະຫວ່າງບັນດາປະເທດ ຕາມລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ການຮ່ວມກັນສ້າງໂຄງການພື້ນຖານໂຄງລ່າງດ້ານພະລັງງານ, ພະລັງງານໝູນວຽນ, ການສ້າງຕາຂ່າຍໄຟຟ້າທີ່ທັນສະໄໝ, ອຸດສາຫະກຳຜະລິດໄຟຟ້າດ້ວຍພະລັງງານແສງຕາເວັນ ແລະ ການສະສົມພະລັງງານ, ລົດໃຊ້ພະລັງງານໄຟຟ້າ ແລະ ເຄື່ອງອາໄຫຼ່, ການລົງທຶນດ້ານການພັດທະນາສີຂຽວ ແລະ ອື່ນໆ. ຜົນການການອອກແບບຈະສາມາດສົ່ງເຂົ້າອີເມວ: lmcda2024@163.com.

ແຫຼ່ງຂ່າວ: ເວັບໄຊປະຊາຊົນ, ເວັບໄຊຂ່າວສານຈີນ

**ເນື້ອໃນເພີ່ມເຕີມ:**

ກົນໄກຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແມ່ນກົນໄກຮ່ວມມືອະນຸພາກພື້ນແບບໃໝ່ລະຫວ່າງ ຈີນ, ລາວ, ກຳປູເຈຍ, ມຽນມາ, ໄທ ແລະ ຫວຽດນາມ. ນັບແຕ່ປີ 2020 ເປັນຕົ້ນມາ, ງານປະກວດການອອກແບບດ້ານສິລະປະສາກົນ ພາຍໃຕ້ຂອບການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ໄດ້ຈັດຂຶ້ນຕາມເວລາກຳນົດ ເຊິ່ງໄດ້ກາຍເປັນຂົວເຊື່ອມຕໍ່ດ້ານສິລະປະ ທີ່ໄດ້ເຊື່ອມຕໍ່ 6 ປະເທດດັ່ງກ່າວ ຢ່າງແໜ້ນແຟ້ນ ແລະ ເປັນກິດຈະກຳອອກແບບດ້ານສິລະປະສາກົນ ທີ່ມີຊື່ສຽງ ແລະ ອິດທິພົນອ່າວສູງໃນພາກພື້ນດັ່ງກ່າວ.

ແຫຼ່ງຂ່າວ: ເວັບໄຊປະຊາຊົນ

# ນັກຂ່າວລາວໄດ້ເຂົ້າຮ່ວມຊຸດສຳມະນາຢູ່ແຂວງຢຸນນານ ແລະ ນະຄອນຊຽງໄຮ້



ຊຸດສຳມະນານັກຂ່າວລາວ ໄດ້ດຳເນີນ ຢູ່ແຂວງຢຸນນານ ແລະ ນະຄອນຊຽງໄຮ້ ສປ ຈີນ ແຕ່ວັນທີ 21 - 27 ເມສາຜ່ານມານີ້ ໂດຍເນັ້ນໃສ່ຫົວຂໍ້ “ຄວາມທັນສະໄໝແບບຈີນ - ການສ້າງຄວາມຈະເລີນຮຸ່ງເຮືອງຢູ່ຊົນນະບົດ ແລະ ການສ້າງສາພັດທະນາຕົວເມືອງປະຊາຊົນ”.

ໃນໄລຍະຢູ່ນະຄອນຊຽງໄຮ້, ນັກຂ່າວລາວ ໄດ້ແລກປ່ຽນກັບສື່ມວນຊົນຊຽງໄຮ້, ຢ້ຽມຢາມຫໍວາງສະແດງການຮ່ວມມືດ້ານເສດຖະກິດການຄ້າລາວ ແລະ ແຫ່ງອື່ນໆ. ໃນໄລຍະຢູ່ແຂວງຢຸນນານ, ໄດ້ໄປທັດສະນະສຶກສາຢູ່ນະຄອນຄຸນໝິງ ແລະ ກິ່ງແຂວງປົກຄອງຕົນເອງເຜົ່າຮານີ - ເຜົ່າຢີ ຫົງເຫີ ພ້ອມທັງໄດ້ແລກປ່ຽນຄວາມເຫັນກັບຜູ້ຊ່ຽວຊານ ແລະ ເຈົ້າໜ້າທີ່ ທີ່ມາຈາກສະຖາບັນວິທະຍາສາດສັງຄົມແຂວງຢຸນນານ, ມະຫາວິທະຍາໄລກະສິກຳຢຸນນານ ແລະ ກຸ່ມໜັງສືພິມລາຍວັນຢຸນນານ. ໃນຂະນະດຽວກັນ, ນັກຂ່າວທັງຫຼາຍ ຍັງໄດ້ຂີ່ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟ ລາວ-ຈີນ ແລະ ໄປຢ້ຽມຊົມຫ້ອງສະໝຸດໃນຕູ້ລົດໄຟ.

ບົດໂດຍ: Liu Ziyu

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com